**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

----===000===----

ກະຊວງໂยທາທິການ ແລະຂົນສົ່ງ

ຄະນະວິຊາການຊ່ວຍວຽກສາມລ້າງ

ນະຄອນຫລວງວຽງຈັນ, ວັນທີ: **19/11/2012**

# ບົດບັນທຶກ

## ການແບ່ງຄວາມຮັບຜິດຊອບ ເພື່ອຈັດຕັ້ງເຮັດທົດລອງສາມສ້າງສຳລັບຂັ້ງເຂດຂົວທາງ ລະຫວ່າງກົມຂົວທາງ, ພະແນກ ຍທຂ ນະຄອນຫລວງ ແລະຫ້ອງການ ຍທຂ ເມືອງທົດລອງ

- ອີງຕາມມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 15/2/2012.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 16/ນຍ, ລົງວັນທີ 15/6/2012.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 398/ນຍ, ລົງວັນທີ 12/9/2012 ວ່າດ້ວຍການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ສົກປີ 2012-2013.
- ອີງຕາມຄຳສັ່ງແນະນຳຂອງລັດຖະມົນຕີວ່າການ, ສະບັບເລກທີ 15562/ຍທຂ, ລົງວັນທີ 17/9/2012.

**I. ກົມຂົວທາງ ຮັບຜິດຊອບ :**

1. ສ້າງແຜນຍຸດທະສາດການພັດທະນາເສັ້ນທາງ ໃນແຕ່ລະໄລຍະໃນຂອບເຂດທົ່ວປະເທດ.
2. ສ້າງ ແລະປັບປຸງບັນດາກົດໝາຍ, ຂໍ້ຕົກລົງ, ລະບຽບການ ແລະມາດຕະຖານເຕັກນິກຕ່າງໆທີ່ເຫັນວ່າຈຳເປັນ ແລະຍັງຂັດຕັນ ເພື່ອໃຫ້ສອດຄ່ອງຕາມທິດສາມສ້າງ.
3. ເປັນເຈົ້າການໃນການຕິດຕາມກວດກາ ບັນທັງສ້າງກົນໄກຕ່າງໆ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຂົວທາງຂອງພະແນກ ຍທຂ ນະຄອນຫລວງ ແລະບັນດາຫ້ອງການ ຍທຂ ເມືອງທົດລອງ ເພື່ອໃຫ້ຮັບປະກັນທາງດ້ານຄຸນນະພາບ ແລະຄວາມໂປ່ງໃສ ໂດຍອີງຕາມມາດຕະຖານດ້ານເຕັກນິກ, ກຳນົດໝາຍລາຄາຫົວໜ່ວຍ ແລະລະບຽບການອື່ນໆຂອງກະຊວງ ແລະທັງເປັນຜູ້ອະນຸມັດທຸກການປ່ຽນແປງທາງດ້ານເຕັກນິກ.
4. ປັບປຸງມາດຕະຖານເຕັກນິກການສຳຫລວດອອກແບບ ແລະກໍ່ສ້າງຂອງກິດຈະການດ້ານຂົວທາງໃນຂອບເຂດທົ່ວປະເທດ.
5. ຈັດຝຶກອົບຮົມ, ສ້າງບົດແນະນຳ ຫລືປຶ້ມຄູ່ມືໃນການນຳໃຊ້ເຕັກນິກ, ກຳນົດໝາຍລາຄາຫົວໜ່ວຍ ແລະລະບຽບການປະມູນຕ່າງໆ (ເປັນພາສາລາວ) ໃຫ້ພະແນກ ຍທຂ ນະຄອນຫລວງ ແລະບັນດາຫ້ອງການ ຍທຂ ເມືອງທົດລອງ.
6. ຂົນຂວາຍແຫລ່ງທຶນ ແລະປະສານສົມທົບກັບຜູ້ໃຫ້ທຶນ.

**II. ພະແນກ ຍທຂ ນະຄອນຫລວງວຽງຈັນ ຮັບຜິດຊອບ:**

1. ເຜີຍແຜ່ຂະຫຍາຍບັນດາກົດໝາຍ, ດຳລັດ, ມະຕິຕົກລົງ, ຄຳສັ່ງແນະນຳ, ກົດລະບຽບ, ຂໍ້ກຳນົດ, ມາດຕະຖານເຕັກນິກ ແລະກຳນົດໝາຍລາຄາຫົວໜ່ວຍຂອງກະຊວງ ຍທຂ.

2. ຄົ້ນຄວ້າສ້າງແຜນ ແລະຜັນຂະຫຍາຍແຜນຍຸດທະສາດທາງດ້ານການປັບປຸງ, ຍົກລະດັບ ແລະບູລະນະຮັກສາຂົວທາງໃນແຕ່ລະໄລຍະ ໂດຍອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມຂອງນະຄອນຫລວງ ແລະກະຊວງ ຍທຂ.
3. ສ້າງບົດສະເໜີໂຄງການທີ່ຕິດພັນກັບທາງຫລວງແຂວງ ແລະທາງຫລວງເມືອງ ເພື່ອຄົ້ນຄວ້າ ແລະຊອກຫາແຫລ່ງທຶນທັງພາຍໃນ ແລະຕ່າງປະເທດ.
4. ເປັນເຈົ້າການໃນການປະມູນຈັດຊື້-ຈັດຈ້າງ ຫລືເຈລະຈາ ແລະຈັດຕັ້ງປະຕິບັດທຸກໆໂຄງການກໍ່ສ້າງຂົວທາງທີ່ຢູ່ໃນຂອບເຂດນະຄອນຫລວງວຽງຈັນ. ສຳລັບໂຄງການທີ່ມີມູນຄ່າຫລາຍກວ່າ 10 ຕື້ກີບຕ້ອງໄດ້ຜ່ານການກວດກາທາງດ້ານເຕັກນິກ ແລະລາຄາຫົວໜ່ວຍຈາກກົມຂົວທາງກ່ອນ, ຫລັງຈາກນັ້ນ ຈຶ່ງນຳໄປຈັດຕັ້ງປະຕິບັດ. ສຳລັບຫົວໜ້າໂຄງການ ຖ້າຫາກພະແນກ ຍທຂ ນະຄອນຫລວງບໍ່ມີພະນັກງານວິຊາການພຽງພໍ ທາງກະຊວງຈະຄົ້ນຄວ້າປະກອບພະນັກງານລົງຊ່ວຍ
5. ຢັ້ງຢືນຮັບຮອງເອົາການສຳຫລວດ-ອອກແບບ, ມູນຄ່າໂຄງການກໍ່ສ້າງ ຫລືສ້ອມແປງຂົວທາງທີ່ຕິດພັນກັບທາງຫລວງແຂວງທີ່ມີມູນຄ່າບໍ່ເກີນ 10 ຕື້ກີບ ໂດຍອີງຕາມມາດຕະຖານເຕັກນິກ ແລະລາຄາຫົວໜ່ວຍຂອງກະຊວງ ຍທຂ.
6. ຕິດຕາມ, ກວດກາ, ຊຸກຍູ້ການກໍ່ສ້າງ ຫລືສ້ອມແປງຂົວທາງ ທີ່ມອບໃຫ້ຫ້ອງການ ຍທຂ ເມືອງທົດລອງເປັນຜູ້ຈັດຕັ້ງປະຕິບັດ.
7. ສັງລວມຂໍ້ມູນສະຖິຕິຂົວທາງພາຍໃນນະຄອນຫລວງ.
8. ຄຸ້ມຄອງ ແລະອອກອະນຸຍາດດຳເນີນທຸລະກິດຂົວທາງໃນແຕ່ລະປີໃຫ້ບັນດາບໍລິສັດ.
9. ສະຫລຸບລາຍງານການຈັດຕັ້ງປະຕິບັດວຽກງານໃຫ້ເຈົ້າຄອງນະຄອນຫລວງ ແລະກະຊວງ ຍທຂ ເປັນປະຈຳເດືອນ, ງວດ ແລະປະຈຳປີ.

**III. ຫ້ອງການ ຍທຂ 3 ເມືອງທົດລອງ ຮັບຜິດຊອບ:**

1. ຜັນຂະຫຍາຍບັນດາກົດໝາຍ, ດຳລັດ, ມະຕິຕົກລົງ, ຄຳສັ່ງ, ກົດລະບຽບ, ຂໍ້ກຳນົດ, ມາດຕະຖານເຕັກນິກ ແລະລາຄາຫົວໜ່ວຍຂອງກະຊວງ ຍທຂ.
2. ຄົ້ນຄວ້າສ້າງແຜນ ແລະຈັດຕັ້ງປະຕິບັດແຜນພັດທະນາວຽກງານຂົວທາງ ເປັນແຕ່ລະໄລຍະໃນຂອບເຂດເມືອງຂອງຕົນ ໂດຍອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ແລະຂອງພະແນກ ຍທຂ ນະຄອນຫລວງ.
3. ເປັນເຈົ້າການໃນການປະມູນຈັດຊື້-ຈັດຈ້າງ ຫລືເຈລະຈາ ແລະຈັດຕັ້ງປະຕິບັດທຸກໆໂຄງການກໍ່ສ້າງຂົວທາງທີ່ຢູ່ໃນຂອບເມືອງຂອງຕົນ. ສຳລັບໂຄງການທີ່ມີມູນຄ່າຫລາຍກວ່າ 10 ຕື້ກີບ ຕ້ອງໄດ້ຜ່ານການກວດກາທາງດ້ານເຕັກນິກ ແລະລາຄາຫົວໜ່ວຍຈາກກົມຂົວທາງກ່ອນ, ຫລັງຈາກນັ້ນ ຈຶ່ງນຳໄປຈັດຕັ້ງປະຕິບັດ. ສຳລັບຫົວໜ້າໂຄງການ ຖ້າຫາກຫ້ອງການ ຍທຂ ເມືອງທົດລອງ ບໍ່ມີພະນັກງານວິຊາການພຽງພໍ ທາງພະແນກ ຍທຂ ນະຄອນຫລວງ ຈະຄົ້ນຄວ້າປະກອບພະນັກງານລົງຊ່ວຍ.
4. ຄຸ້ມຄອງ, ປົກປັກຮັກສາເສັ້ນທາງທັງໝົດພາຍໃນເມືອງຂອງຕົນເຊັ່ນ: ທາງຫລວງແຫ່ງຊາດ, ທາງຫລວງແຂວງ, ທາງຫລວງເມືອງ ແລະເສັ້ນທາງອື່ນໆ, ຖ້າມີການລະເມີດເຂດສະຫງວນຂອງທາງຫລືກະທຳສິ່ງທີ່ມີຜົນກະທົບຕໍ່ເສັ້ນທາງ ຫ້ອງການ ຍທຂ ເມືອງມີສິດກ່າວເຕືອນ, ສຶກສາອົບຮົມ, ຍິ່ງກວ່ານັ້ນແມ່ນມີສິດປັບໄໝຕາມລະບຽບ ແລະກົດໝາຍ.
5. ເຂົ້າຮ່ວມຕິດຕາມ, ກວດກາການກໍ່ສ້າງທາງຫລວງແຫ່ງຊາດ, ທາງຫລວງແຂວງ ທີ່ພະແນກ ຍທຂ

ນະຄອນຫລວງຮັບຜິດຊອບຢູ່ໃນຂອບເຂດເມືອງຂອງຕົນ ແລະເປັນເຈົ້າການໄກ່ເກັ່ຍການຍົກຍ້າຍສິ່ງກີດຂວາງຕ່າງໆ.

6. ປຸກລະດົມປະຊາຊົນປະກອບສ່ວນທຶນຮອນ ແລະແຮງງານ ເພື່ອມີສ່ວນຮ່ວມໃນການກໍ່ສ້າງ, ສ້ອມແປງ ແລະປົກປັກຮັກສາເສັ້ນທາງພາຍໃນເມືອງ.
7. ເປັນເຈົ້າການໃນການຄຸ້ມຄອງ, ກວດກາຄຸນນະພາບຂອງວຽກກໍ່ສ້າງ, ສ້ອມແປງເສັ້ນທາງໃນຂອບເຂດເມືອງຂອງຕົນ ແລະປົກປັກຮັກສາເຂດສະຫງວນຂອງທາງທຸກປະເພດໃນຂອບເຂດເມືອງ, ນັບທັງການປົກປັກຮັກສາ ແລະລວງຮ່ອງລະບາຍນ້ຳແຄມທາງ.
8. ຮັບຜິດຊອບວຽກງານສ້ອມແປງເສັ້ນທາງແບບມອບເໝົາ 3 ປີ.
9. ເກັບກຳ, ຕິດຕາມ ແລະລາຍງານສະພາບເສັ້ນທາງໃນຂອບເຂດເມືອງຂອງຕົນ. ໃນກໍລະນີເກີດສຸກເສີນຈາກທຸກເຫດການເຊັ່ນ: ໄມ້ລົ້ມທັບທາງ, ດິນ-ຫີນເຈື່ອນທັບທາງ, ທາງເຈື່ອນ, ທາງຂາດ, ຂົວຂາດ, ນ້ຳຖ້ວມທາງ ແລະອື່ນໆ ເພື່ອຄົ້ນຄ້ວາຫາວິທີແກ້ໄຂໃຫ້ທັນການ.
10. ເກັບກຳສະຖິຕິເສັ້ນທາງ, ຂົວ, ທໍ່ລະບາຍນ້ຳ ແລະອື່ນໆ ທັງໝົດໃນຂອບເຂດເມືອງຂອງຕົນ ເພື່ອລາຍງານໃຫ້ພະແນກ ຍທຂ ນະຄອນຫລວງເປັນປົກກະຕິ.
11. ສະຫລຸບລາຍງານການຈັດຕັ້ງປະຕິບັດວຽກງານໃຫ້ເຈົ້າເມືອງ ແລະ ພະແນກ ຍທຂ ນະຄອນຫລວງເປັນປະຈຳເດືອນ, ງວດ ແລະປະຈຳປີ.

## IV. ຜົນສັກສິດ:

1. ບົດບັນທຶກສະບັບນີ້ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.
2. ພາຍຫລັງທີ່ໄດ້ລົງລາຍເຊັນແລ້ວ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ກະກຽມຄວາມພ້ອມດ້ານຕ່າງໆ ໂດຍສະເພາະແມ່ນດ້ານບຸກຄະລາກອນ, ແຜນການ ແລະງົບປະມານ ເພື່ອຈັດຕັ້ງປະຕິບັດເນື້ອໃນຂອງບົດບັນທຶກສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ຫົວໜ້າກົມຂົວທາງ**

**ຫົວໜ້າພະແນກ ຍທຂ**
**ນະຄອນຫລວງວຽງຈັນ**

**ຫົວໜ້າຫ້ອງການ ຍທຂ**
**ເມືອງສີສັດຕະນາກ**

**ຫົວໜ້າຫ້ອງການ ຍທຂ**
**ເມືອງຈັນທະບູລີ**

**ຫົວໜ້າຫ້ອງການ ຍທຂ**
**ເມືອງສັງທອງ**